# ພັນທະຂອງເຈົ້າຂອງເຮືອນ ໂຄງການບັດອະນຸມັດໃຫ້ຊື້ເຮືອນຢູ່ ເປັນຂອງຕົວເອງ

**ກະຊວງເຄຫະສຖານແລະ**
**ການພັທນາຕົວເມືອງຂອງສຫະຣັຖ**
ກົມເຄຫະສຖານຫລວງແລະສໍາລັບຊົນເຜົ່າອາເມຣິກັນອິນດຽນ

OMB **ອະນຸຍາດເລກ**ທີ. 2577-0169
(ມື້ໝົດກໍານົດ 9/30/2010)

ປະເມີນວ່າເວລາໃຊ້ເພື່ອເກັບກໍາຂໍ້ມູນເພື່ອຕອບຄໍາຖາມນີ້ ຄິດສເລ່ຍຈະຕົກເປັນປະມານ 0.25 ຊົ່ວໂມງ ຊຶ່ງໂຮມທັງເວລາກວດເບິ່ງຄໍາແນະນໍາ ເວລາຄົ້ນເບິ່ງແຫລ່ງຂໍ້ມູນທີ່ມີຢູ່ແລ້ວ ເວລາຮວບຮວມແລະຮັກສາຂໍ້ມູນທີ່ຕ້ອງການ ແລະເວລາກວດເບິ່ງການເກັບກໍາຂໍ້ມູນ.
ການອະນຸຍາດໃຫ້ເກັບກໍາຂໍ້ມູນນີ້ ບົ່ງໄວ້ໃນວັກ 8(Y) ຂອງກົດໝາຍວ່າດ້ວຍການເຄຫະສຖານຂອງສຫະຣັຖ. ຂໍ້ມູນເຫລົ່ານີ້ບັລຍາຍເຖິງພັນທະຂອງຜູ້ທີ່ເລືອກເຂົ້າຮ່ວມໃນໂຄງການເປັນເຈົ້າຂອງເຮືອນ ພາຍໃຕ້ໂຄງການອະນຸມັດໃຫ້ຊື້ເຮືອນເປັນຂອງຕົນເອງ.

1. **ພັນທະຂອງເຈົ້າຂອງເຮືອນ.** ຄອບຄົວທີ່ເຂົ້າຮ່ວມໃນໂຄງການອະນຸມັດໃຫ້ຊື້ເຮືອນເປັນຂອງຕົນເອງຂອງກົມເຄຫະສຖານຫລວງ (PHA) ທີ່ມີຊື່ຢູ່ຂ້າງລຸ່ມນີ້ ຕ້ອງປະຕິບັດຕາມກົດຣະບຽບທີ່ລະບຸໄວ້ຂ້າງລຸ່ມ ຈຶ່ງຈະມີສິດໄດ້ຮັບການຊ່ວຍເຫລືອເພື່ອຊື້ເຮືອນເປັນຂອງຕົນເອງ. ຂໍ້ມູນທຸກຢ່າງທີ່ຄອບຄົວໃຫ້ມານັ້ນ ຕ້ອງເປັນຄວາມຈິງແລະຄົບຖ້ວນ. ສມາຊິກຄອບຄົວແຕ່ລະຄົນ (ແລະຜູ້ຊ່ວຍທີ່ PHA ອະນຸຍາດໃຫ້ອາສັຍຢູ່ນໍາ ຍ້ອນກົດຣະບຽບທີ່ກ່ຽວພັນກັບການປະພຶດທີ່ບໍ່ດີ ຫລືການຕິດເຫລົ້າເມົາຢາ) ຕ້ອງ:

ກ. ບອກນໍາເບີປະກັນສັງຄົມພ້ອມກັບເບີປະຈໍາຕົວຂອງນາຍຈ້າງ ພ້ອມກັບສແດງເອກສານຢັ້ງຢືນວ່າຖືກຕ້ອງ, ເຊັນແລະມອບໃບຟອມອະນຸຍາດໃຫ້ທາງການມີສິດສອບຖາມເອົາຂໍ້ມູນກ່ຽວກັບຕົນໄດ້ (ໂຮມທັງບັນທຶກການຕັດສິນໂທດໃນກໍຣະນີຂອງສມາຊິກຜູ້ທີ່ອາຍຸກາຍກະສຽນແລ້ວ), ແລະຂໍ້ມູນອື່ນໆຕາມຄວາມຕ້ອງການຂອງ PHA ແລະ HUD (ເຊັ່ນຫລັກຖານຢັ້ງຢືນສັນຊາດ ຫລືເອກສານອະນຸຍາດໃຫ້ຢູ່ໃນປະເທດໄດ້ຢ່າງຖືກຕ້ອງຕາມກົດໝາຍ, ຂໍ້ມູນທີ່ຈໍາເປັນເພື່ອຊ່ວຍຕັດສິນວ່າຜູ້ກ່ຽວຄວນມີສິດໄດ້ຮັບການຊ່ວຍເຫລືອເພື່ອໃຫ້ໄດ້ເປັນເຈົ້າຂອງເຮືອນຫລືບໍ່, ແລະຂໍ້ມູນເພື່ອໃຊ້ໃນການສໍາຣວດປະຈໍາປີຫລືກາງປີກ່ຽວກັບລາຍໄດ້ ແລະການປ່ຽນແປງໃນຈໍານວນສມາຊິກໃນຄອບຄົວ.

ຂ. ສເນີຣາຍງານຄືບໜ້າກ່ຽວກັບການຊອກຊື້ເຮືອນຕາມເງື່ອນໄຂຂອງ PHA.

ຄ. ເຂົ້າຟັງຈົນຈົບ ການແນະນໍາກ່ຽວກັບການເປັນເຈົ້າຂອງເຮືອນແລະການເຄຫະສຖານ ຕາມລະບຽບຂອງ PHA.

ງ. ເລືອກນັກກວດກາອາຊີບທີ່ເປັນອິສຣະໄປກວດເບິ່ງສພາບຂອງເຮືອນ ກ່ອນຈະຕັດສິນໃຈຊື້ ແລະຈ່າຍຄ່າບໍຣິການດັ່ງກ່າວ. ການກວດການັ້ນຕ້ອງໃຫ້ໄດ້ຕາມກົດຣະບຽບຂອງ PHA.

ຈ. ເຊັນສັນຍາຊື້ຂາຍກັບເຈົ້າຂອງຜູ້ຂາຍເຮືອນແລະມອບສໍາເນົາຂອງສັນຍາຊື້ຂາຍສບັບນຶ່ງໃຫ້ PHA ໄວທີ່ສຸດ. ເງື່ອນໄຂຂອງສັນຍາຊື້ຂາຍຕ້ອງໃຫ້ສອດຄ້ອງກັບກົດຣະບຽບ ຂອງ PHA.

ສ. ຊື້ແລະຮັກສາປະກັນພັຍນໍ້າຖ້ວມ ຖ້າເຮືອນຫາກຢູ່ໃນເຂດທີ່ມັກມີນໍ້າຖ້ວມ.

ຊ. ປະຕິບັດຕາມເງື່ອນໄຂການຂໍກູ້ຢືມເງິນມາຊື້ເຮືອນ (ຫລືຂໍຢືມເງິນເທື່ອໃໝ່ເພື່ອໃຊ້ໜີ້ເກົ່າ Refinance).

ຍ. ແຈ້ງໃຫ້ PHA ຊາບທາງຈົດໝາຍທັນທີຖ້າຫາກວ່າ (1) ຄອບຄົວບໍ່ຢູ່ໃນເຮືອນເປັນເວລານານ ເພື່ອໃຫ້ຖືກຕ້ອງຕາມນະໂຍບາຍຂອງ PHA ແລະ (2) ກ່ອນທີ່ຄອບຄົວຈະຍ້າຍອອກຈາກເຮືອນ. ໃຫ້ຂໍ້ມູນຫລືຫລັກຖານຢືນຢັນ ຕາມການຮ້ອງຂໍຂອງ PHA ເພື່ອສແດງວ່າຄອບຄົວອາສັຍຢູ່ໃນເຮືອນຫລັງນັ້ນ ຫລືຂໍ້ມູນກ່ຽວກັບວ່າເປັນຫຍັງຄອບຄົວຈຶ່ງບໍ່ຢູ່ເຮືອນ.

ດ. ມີພຽງສມາຊິກຄອບຄົວ, ຜູ້ຊ່ວຍ, ຫລືລູກລ້ຽງຊຶ່ງ PHA ອະນຸຍາດແລ້ວເທົ່ານັ້ນທີ່ມີສິດອາສັຍຢູ່ໃນເຮືອນ. ຜູ້ອື່ນບໍ່ມີສິດຢູ່ໃນເຮືອນ. ເຮືອນຕ້ອງເປັນບ່ອນອາສັຍແຫ່ງດຽວຂອງຄອບຄົວແລະສມາຊິກຄອບຄົວຜູ້ໃດກໍບໍ່ມີສິດເປັນເຈົ້າຂອງ ຫລືມີສ່ວນເປັນເຈົ້າຂອງເຮືອນຫລືທີ່ພັກອາສັຍແຫ່ງອື່ນໄດ້. ກ່ອນອື່ນໝົດ ເຮືອນຕ້ອງໃຊ້ເປັນບ່ອນຢູ່. ການກະທໍາຢ່າງໃດກໍດີໃນບ້ານ ທີ່ເຮັດໃຫ້ມີຣາຍໄດ້ຢ່າງຖືກຕ້ອງຕາມກົດໝາຍນັ້ນ ຕ້ອງເປັນເຫດການທີ່ມີຂຶ້ນໂດຍບັງເອີນເປັນບາງຄັ້ງບາງຄາວເທົ່ານັ້ນ. ຄອບຄົວບໍ່ມີສິດແບ່ງເຮືອນຫລືເດີນບ້ານໃຫ້ຄົນເຊົ່າ.

ຕ. ແຈ້ງໂດຍທາງຈົດໝາຍໃຫ້ PHA ຊາບທັນທີ ຖ້າມີເດັກນ້ອຍເກີດໃໝ່ ມີການຮັບລູກບຸນທັມ ຫລືຖ້າສານໄດ້ຕັດສິນມອບລູກໃຫ້ໃນກໍຣະນີຢ່າຮ້າງກັນ, ແລະຂໍໃຫ້ PHA ອະນຸຍາດເປັນລາຍລັກອັກສອນ ໃຫ້ຕື່ມຈໍານວນສມາຊິກຄອບຄົວທີ່ມີສິດຢູ່ໃນເຮືອນໄດ້. ຈົດໝາຍແຈ້ງໃຫ້ PHA ຊາບທັນທີ ຖ້າມີສມາຊິກຄອບຄົວຜູ້ໃດບໍ່ອາສັຍຢູ່ເຮືອນຕໍ່ໄປ.

ຖ. ແຈ້ງຂໍ້ມູນທຸກຢ່າງທີ່ PHA ຫລື HUD ຕ້ອງການກ່ຽວກັບ: (1) ເງິນຢືມມາຊື້ເຮືອນ (mortgage) ຫລືໜີ້ອື່ນທີ່ຢືມມາເພື່ອຊື້ເຮືອນ ຫລືເງິນທີ່ຂໍຢືມໃໝ່ເພື່ອໃຊ້ໜີ້ເກົ່າໂດຍເອົາເຮືອນຈໍານອງໄວ້(refinance) (ໂຮມທັງຂໍ້ມູນທີ່ຕ້ອງການເພື່ອຕັດສິນວ່າຄອບຄົວບໍ່ໄດ້ຈ່າຍໜີ້ຕາມສັນຍາຫລືບໍ່ ຫລືເຫດຜົນວ່າເປັນຫຍັງຈຶ່ງບໍ່ຈ່າຍ)ແລະຂໍ້ມູນກ່ຽວກັບຫລັກຖານທີ່ສແດງໃຫ້ເຫັນວ່າຄອບຄົວໄດ້ຈ່າຍເງິນທີ່ກູ້ຢືມມາຕາມສັນຍາທຸກປະການ; (2) ການຂາຍຫລືການໂອນຜົນປະໂຍດຢ່າງໃດຢ່າງນຶ່ງໃນເຮືອນ; ຫລື (3) ລາຍຈ່າຍກ່ຽວກັບການເປັນເຈົ້າຂອງເຮືອນ.

ທ. ຈົດໝາຍແຈ້ງໃຫ້ PHA ຊາບທັນທີ ຖ້າຄອບຄົວບໍ່ຈ່າຍເງິນຫລືໜີ້ທີ່ຢືມມາເພື່ອຊື້ເຮືອນຕາມສັນຍາ.

ນ. ບໍ່ສໍ້ໂກງ, ໃຫ້ສິນບົນ ຫລືກະທໍາຄວາມຜິດອື່ນໆກ່ຽວພັນກັບໂຄງການເຄຫະສຖານອັນໃດອັນນຶ່ງຂອງຣັຖບານກາງສຫະຣັຖ. ບໍ່ກະທໍາຄວາມຜິດທີ່ກ່ຽວກັບເຣື່ອງຢາເສບຕິດ ຫລືຄວາມຜິດຂັ້ນຮຸນແຮງ. ບໍ່ກະທໍາຄວາມຜິດຢ່າງອື່ນ ທີ່ຈະເປັນພັຍອັນຕຣາຍຕໍ່ສຸຂພາບ, ຄວາມປອດພັຍ ຫລືຄວາມສງົບສຸກຂອງຜູ້ອື່ນທີ່ຢູ່ໃກ້ຄຽງ. ບໍ່ກິນເຫລົ້າເກີນຂອບເຂດ ຈົນເປັນພັຍອັນຕຣາຍຕໍ່ສຸຂພາບ, ຄວາມປອດພັຍ ຫລືຄວາມສງົບສຸກຂອງຜູ້ອື່ນທີ່ຢູ່ໃກ້ຄຽງ. ບໍ່ມີປະຕິກິຣິຍາແບບຂົ່ມຂູ່ຫລືຮຸນແຮງໃສ່ເຈົ້າໜ້າທີ່ຂອງ PHA. ບໍ່ມີກິຣິຍາບໍ່ດີ ທີ່ຈະເປັນພັຍຂົ່ມຂູ່ຕໍ່ສຸຂພາບຂອງຜູ້ຊຶ່ງຮັບຜິດຊອບ ຫລືປະຕິບັດງານຕາມໜ້າທີ່ຜູ້ບໍຣິຫານໂຄງການ ໃນນາມຂອງ PHA (ໂຮມທັງເຈົ້າໜ້າທີ່ແລະຜູ້ຮັບເໝົາແລະອື່ນໆຂອງ PHA).

ບ. ບໍ່ໃຫ້ເຊົ່າຕໍ່ ບໍ່ວ່າລະຍະຍາວຫລືສັ້ນ ຫລືໂອນເຮືອນ ນອກຈາກໃນກໍຣະນີໃຊ້ເປັນສິນຈໍານອງເພື່ອຢືມເງິນໄປຊື້ເຮືອນຫລືຂໍຢືມເງິນເທື່ອໃໝ່ refinance ເພື່ອໃຊ້ໜີ້ດັ່ງກ່າວ.

ປ. ບໍ່ຮັບການຊ່ວຍເຫລືອຕາມໂຄງການອະນຸມັດໃຫ້ຊື້ເຮືອນເປັນຂອງຕົນເອງ ໃນຂນະທີ່ໄດ້ຮັບເງິນຊ່ວຍເຫລືອໃນດ້ານທີ່ພັກອາສັຍຢູ່ ສໍາລັບເຮືອນຫລັງດຽວກັນ ຫລືທີ່ພັກພາອາສັຍແຫ່ງອື່ນ ຕາມຣະບຽບຫ້າມຮັບການຊ່ວຍເຫລືອຊໍ້າຂອງໂຄງການຊ່ວຍເຫລືອດ້ານທີ່ພັກພາອາສັຍຂອງທາງການທ້ອງຖິ່ນ, ຂອງຣັຖບານຣັຖ, ຫລື ຣັຖບານກາງ.

ຜ. ປະຕິບັດຕາມເງື່ອນໄຂເພີ່ມຕື່ມຕ່າງໆຂອງ PHA ກ່ຽວກັບການຊອກແລະຊື້ເຮືອນຂອງຄອບຄົວແລະກ່ຽວກັບການສືບຕໍ່ໄດ້ຮັບການຊ່ວຍເຫລືອໃນດ້ານສົ່ງເສີມໃຫ້ມີເຮືອນຂອງຕົນເອງຢູ່. PHA ຕ້ອງຄັດຕິດເງື່ອນໄຂເຫລົ່ານັ້ນ ໄປພ້ອມກັບເອກສານສບັບນີ້.

2. **ງົດການຊ່ວຍເຫລືອ.** ຄອບຄົວຈະໄດ້ຮັບເງິນຊ່ວຍເຫລືອ ກໍຕໍ່ເມື່ອອາສັຍຢູ່ໃນເຮືອນຫລັງດັ່ງກ່າວເທົ່ານັ້ນ. PHA ມີສິດປະຕິເສດຫລືງົດການຊ່ວຍເຫລືອ ດ້ວຍເຫດຜົນ ດັ່ງຕໍ່ໄປນີ້:

ກ. ຄອບຄົວລະເມີດ ຫລືເຄີຍລະເມີດພັນທະຂໍ້ໃດຂໍ້ນຶ່ງທີ່ບົ່ງໄວ້ໃນ ວັກ 1.

ຂ. ສມາຊິກໃນຄອບຄົວຜູ້ໃດຜູ້ນຶ່ງ ເຄີຍຖືກໄລ່ອອກຈາກເຮືອນທີ່ໄດ້ມາຈາກການຊ່ວຍເຫລືອຂອງຣັຖບານກາງໃນລະຍະເວລາຫ້າປີທີ່ຜ່ານມາ ຫລືສມາຊິກໃນບ້ານຜູ້ໃດຜູ້ນຶ່ງຖືກໄລ່ອອກຈາກເຮືອນທີ່ໄດ້ມາຈາກການຊ່ວຍເຫລືອຂອງຣັຖບານກາງ ຍ້ອນໄດ້ທຳຄວາມຜິດທີ່ກ່ຽວກັບເຊື້ອຢາເສບຕິດໃຫ້ໂທດໃນລະຍະເວລາສາມປີທີ່ຜ່ານມາ.

ຄ. ຫ້ອງການ PHA ໃດນຶ່ງ ເຄີຍງົດການຊ່ວຍເຫລືອພາຍໃຕ້ໂຄງການບັດຢັ້ງຢືນໃຫ້ເຊົ່າເຮືອນ ຫລືໂຄງການບັດ voucher ໃຫ້ແກ່ສມາຊິກໃນຄອບຄົວຜູ້ໃດຜູ້ນຶ່ງ.

ງ. ຄອບຄົວຍັງເປັນໜີ້ PHA ທີ່ຕົນໄດ້ຮັບການຊ່ວຍເຫລືອຢູ່ໃນປັດຈຸບັນຫລື PHA ອື່ນ ຊຶ່ງເປັນໜີ້ທີ່ກ່ຽວພັນກັບວັກ 8 ຂອງກົດໝາຍເຄຫະ ຫລືການຊ່ວຍເຫລືອດ້ານເຄຫະສຖານຂອງຫລວງ. ຄອບຄົວບໍ່ໄດ້ໃຊ້ເງິນຄືນໃຫ້ແກ່ PHA ເພື່ອທົດແທນຈຳນວນທີ່ໄດ້ຈ່າຍໃຫ້ເຈົ້າຂອງເຮືອນ ຕາມສັນຍາໃຫ້ເງິນຊ່ວຍເຫລືອດ້ານເຄຫະສຖານສຳລັບຄ່າເຊົ່າ, ຄ່າເສັຍຫາຍແກ່ເຮືອນ ຫລືເງິນຢ່າງອື່ນທີ່ຄອບຄົວຕິດຄ້າງຢູ່. ຄອບຄົວລະເມີດຂໍ້ຕົກລົງທີ່ໄດ້ເຊັນໄວ້ກັບ PHA ວ່າຈະໃຊ້ເງິນທີ່ຄ້າງ PHA ຄືນໃຫ້ແກ່ PHA, ຫລືເງິນ ທີ່ PHA ຈ່າຍລ່ວງໜ້າໃຫ້ເຈົ້າຂອງເຮືອນ.

ຈ. ຖ້າສມາຊິກຜູ້ໃດຜູ້ນຶ່ງໃນຄອບຄົວຕ້ອງລົງທະບຽນຕລອດຊີວິດ ຕາມໂຄງການຂຶ້ນບັນຊີຜູ້ລ່ວງເກີນທາງເພດຂອງຣັຖ.

ສ. ຖ້າສມາຊິກຜູ້ໃດຜູ້ນຶ່ງໃນຄອບຄົວ ຖືກຕັດສິນໂທດໃນຂໍ້ຫາຜລິດຢາບ້າ (Methamphetamine) ໃນບ້ານເຮືອນ ທີ່ໄດ້ມາຈາກການຊ່ວຍເຫລືອຂອງຣັຖບານກາງ.

ຊ. ຖ້າຄອບຄົວຫາກບໍ່ປະຕິບັດຕາມສັນຍາສບັບໃດສບັບນຶ່ງ ວ່າດ້ວຍການເຂົ້າຮ່ວມໂຄງການກຸ້ມຕົນເອງ ແບບບໍ່ມີເຫດຜົນພຽງພໍ.

ຍ. ຖ້າຄອບຄົວບໍ່ປະຕິບັດຕາມ ແບບຕັ້ງໃຈແລະເຮັດຊ້ຳຢູ່ເລື້ອຍໆ ຂໍ້ຜູກມັດຂອງໂຄງການປັບປຸງຖານະໃຫ້ພົ້ນຈາກການຮັບເງິນຊ່ວຍເຫລືອ (Welfare) ເພື່ອໃຫ້ມີວຽກເຮັດງານທຳນັ້ນ.

ດ. ຄອບຄົວຖືກຍຶດເຮືອນເນື່ອງຈາກການຕັດສິນຂອງສານ ຍ້ອນຄອບຄົວບໍ່ໄດ້ຈ່າຍຄ່າເຮືອນ ເພື່ອໃຊ້ເງິນທີ່ຢືມມາຊື້ເຮືອນ (ຫລືທີ່ຂໍຢືມອີກເທື່ອໃໝ່ refinancing).

ຕ. ຖ້າ PHA ລົງຄວາມເຫັນວ່າການຊ່ວຍເຫລືອເພື່ອໃຫ້ມີເຮືອນເປັນຂອງຕົນເອງນັ້ນ ໄດ້ດຳເນີນມາເປັນເວລາດົນທີ່ສຸດເທົ່າທີ່ອະນຸມັດໃຫ້ໄດ້ ພາຍໃຕ້ກົດລະບຽບຂອງໂຄງການ voucher ຫລືເວລາໄດ້ຜ່ານໄປ 180 ວັນແລ້ວ ຫລັງຈາກທີ່ໄດ້ຈ່າຍເງິນໃນນາມຂອງຄອບຄົວຄັ້ງສຸດທ້າຍພາຍໃຕ້ໂຄງການຊ່ວຍເຫລືອໃຫ້ເປັນເຈົ້າຂອງເຮືອນນັ້ນ.

ຖ. ຖ້າ PHA ລົງຄວາມເຫັນວ່າ ບໍ່ມີງົບປະມານພຽງພໍທີ່ຈະດຳເນີນໂຄງການຊ່ວຍເຫລືອນີ້ຕໍ່ໄປ.

## ຮັກສາເອກສານສບັບນີ້ໄວ້ເປັນຫລັກຖານ

| **ຄອບຄົວ** | |
|---|---|
| ຊື່ຫົວໜ້າຄອບຄົວ | ທີ່ຢູ່, ເບີໂທຣະສັບ: |
| ຊື່ສມາຊິກອື່ນໃນຄອບຄົວ | |
| ລາຍເຊັນຂອງຜູ້ຕາງໜ້າຄອບຄົວ | ວັນທີ: (ມມ/ດດ/ປປປປ) |

| **ຫ້ອງການເຄຫະສຖານຫລວງ (PHA)** | |
|---|---|
| ຊື່ຂອງ PHA | ທີ່ຢູ່, ເບີໂທຣະສັບ: |
| ຕຳແໜ່ງຂອງຜູ້ຕາງໜ້າ PHA | |
| ລາຍເຊັນຜູ້ຕາງໜ້າ PHA | ວັນທີ: (ມມ/ດດ/ປປປປ) |

*ເອກສານສບັບນີ້ ແມ່ນແປມາຈາກເອກສານດ້ານກົດໝາຍສບັບຕ່າງໆ ທີ່ກະຊວງເຄຫະສຖານແລະການພັທນາຕົວເມືອງຂອງສຫະຣັຖໄດ້ນຳອອກເຜີຍແຜ່. ທາງກະຊວງເຄຫະ ສຖານແລະການພັທນາຕົວເມືອງ ໄດ້ຈັດເອກສານແປເປັນພາສາລາວສບັບນີ້ ໄວ້ສນອງທ່ານເພື່ອອຳນວຍຄວາມສດວກແລະຊ່ວຍໃຫ້ທ່ານສາມາດເຂົ້າໃຈໃນສິດທິແລະພັນທະ ໜ້າທີ່ຂອງທ່ານ. ສຳເນົາພາສາອັງກິດຂອງເອກສານສບັບນີ້ເທົ່ານັ້ນ ທີ່ເປັນເອກສານທາງການ ແລະມີອຳນາດຜູກມັດທາງດ້ານກົດໝາຍ. ເອກສານທີ່ແປອອກມາເປັນພາສາ ລາວສບັບນີ້ ບໍ່ແມ່ນເອກສານທາງການແຕ່ຢ່າງໃດ.*